Developed by the
Minnesota Department of Health,
Tuberculosis Prevention and Control Program
January 1997 phone: (612) 676-5414

This is one in a series of four patient education pamphlets that addresses TB to be used in various clinical situations.

# ຢາສຳຮັບ ປິ່ນປົວ ການເກີດຕິດເຊື້ອ ໂຣກປອດເຫັງ

**Medicine for Tuberculosis Infection, Lao**

## ການເກີດຕິດເຊື້ອໂຣກປອດແຫ້ງ

ທ່ານໝໍ ຂອງທ່ານ ຈະເປັນຜູ້ບອກ ໃຫ້ທ່ານຮູ້ວ່າ ປອດຂອງທ່ານ ຖືກຕິດໂຣກປອດແຫ້ງແລ້ວຫຼືຍັງ. ທ່ານຄວນຈະຮັບປະທານ ຢາຕ້ານເຊື້ອ ໂຣກປອດແຫ້ງ ຕາມຄຳສັ່ງຂອງທ່ານໝໍ ເພື່ອປ້ອງກັນບໍ່ໃຫ້ ເຊື້ອ ໂຣກນີ້ ຂະຫຍາຍຕົວເກີດຂື້ນແຮງ. ອາດຈະມີຢູ່ໃນໄລຍະນຶ່ງ ໃນອະດີດ ຜ່ານມາ, ທ່ານໄດ້ຫາຍໃຈ ເອົາເຊື້ອໂຣກ ເຂົ້າໄປໃນປອດ. ຫຼັງຈາກນັ້ນ ເຊື້ອໂຣກກໍເລີ່ມກໍ່ຕົວ ຂື້ນຢູ່ໃນຮ່າງກາຍ ຫຼື ເລີ່ມທຳໃຫ້ທ່ານປ່ວຍໄຂ້ໄດ້. ເຊື້ອໂຣກນີ້ ຈະເລື່ອນລອຍຢູ່ໃນ ຮ່າງກາຍຂອງທ່ານ ໂດຍທີ່ ບາງເທື່ອ ກໍອາດຈະບໍ່ ທຳໃຫ້ທ່ານເຈັບປ່ວຍ ຫຍັງ. ແລະທ່ານກໍບໍ່ ສາມາດ ທີ່ຈະແຜ່ຜາຍ ເຊື້ອໂຣກ ໄປໃສ່ຜູ້ໃດ. ນີ້ມັນເອີ້ນວ່າ ໂຣກປອດແຫ້ງອັກເສບ.

ຢາ ທີ່ສາມາດ ໃຊ້ ປ້ອງກັນ ການຂະຫຍາຍຕົວຂອງ ໂຣກປ້ອດແຫ້ງ

ຖ້າຫາກ ທ່ານບໍ່ຮັບປະທານ ຢາຕ້ານເຊື້ອໂຣກປອດແຫ້ງນີ້ ທ່ານອາດຈະເຈັບປ່ວຍ ຈາກເຊື້ອໂຣກປອດແຫ້ງນີ້ໄດ້. ແລະຫຼັງຈາກນັ້ນເຊື້ອໂຣກ ກໍຈະລະບາດ ອອກໄປຕິດໃສ່ຜູ້ອື່ນ. ຢາຕ້ານເຊື້ອ ນີ້ຈະຊ່ວຍປ້ອງກັນບໍ່ໃຫ້ເຊື້ອໂຣກ ຂະຫຍາຍຕົວຂື້ນ ໂດຍ ທີ່ຈະຢານັ້ນ ຈະເຂົ້າໄປຂ້າພຍາດເຫຼົ່ານັ້ນ. ຢານີ້ເອີ້ນວ່າ ຢາ ຊ່ວຍປ້ອງກັນ ໄວ້ກ່ອນໂຣກຈະລະບາດ.

**ຮັບປະທານຢາ ຕາມທີ່ ທ່ານໝໍໄດ້ສັ່ງໃຫ້**

## ການຮັກສາປ້ອງກັນ

ຕາມປົກກະຕິ ທ່ານໝໍ ຈະສັ່ງໃຫ້ໃຊ້ຢາ Isoniazid (INH) ຢານີ້ເປັນຢາຕ້ານເຊື້ອ. ມັນຂ້າເຊື້ອໂຣກປອດແຫ້ງ ໃນຮ່າງກາຍ ຂອງ ທ່ານ. ຕ້ອງຮັບປະທານ ຢານີ້ຕາມຄຳສັ່ງ ຂອງ ທ່ານໝໍ, ຫຼື ຖ້າບໍ່ປະຕິບັດ ດັ່ງນັ້ນ ມັນຈະບໍ່ໄດ້ຜົນຫຍັງ ໃນການ ຊ່ວຍຕ້ານເຊື້ອໂຣກ.

ທ່ານໝໍ ຕ້ອງການພົບທ່ານ ຢ່າງນ້ອຍ ເດືອນລະເທື່ອ ໃນລະຫວ່າງ ທີ່ທ່ານຮັບປະທານ ຢາຕ້ານເຊື້ອນີ້ ເພື່ອຈະໄດ້ຕິດຕາມເບິ່ງຢ່າງຄັກ ແນ່ວ່າ ຮ່າງກາຍ ຂອງທ່ານນັ້ນ ຮັບທົນຕໍ່ຄວາມແຮງ ຂອງຢາ ໄດ້ພຽງໃດທ່ານອາດຈະເກີດມີ ປະຕິກິຣິຍາ ໃນລະຫ່ວາງ ທີ່ ຮັບປະທານ ຢານີ້.

ໂທຣສັບ ໄປຫາ ທ່ານໝໍ ຂອງທ່ານທັນທີ ຖ້າຫາກທ່ານເກີດມີ ອາການຕ່າງໆເຊັ່ນ:

- ປຸ້ນທ້ອງ
- ຮາກ
- ບໍ່ຄຶດຢາກຈະຮັບປະທານ ອາຫານຫຍັງເລີຍ
- ຮູ້ສຶກເມື່ອຍຫຼາຍ ຜິດປົກກະຕິ
- ເຈັບທີ່ທ້ອງນ້ອຍ
- ນ້ຳປັສະວະເປັນສີເຂັ້ມກວ່າທຳມະດາ
- ໜ່ວຍຕາເຫຼືອງ ຫຼື ຜິວເຫຼືອງ
- ເປັນໄຂ້ ດົນກວ່າ ສາມວັນ ຂື້ນໄປ
- ຮູ້ສຶກ ສຽວທີ່ແຂນ ຫຼື ຕີນ
- ມີຜື່ນແດງ ທີ່ຜິວໜັງ

ຖ້າຫາກທ່ານ ດື່ມເຫຼົ້າຕ່າງໆຄື (ເຫຼົ້າວາຍ, ເບັຍ, ແລະເຫຼົ້າອື່ນໆ) ໃນລະຫວ່າງ ເວລາ ທີ່ທ່ານໃຊ້ຢາ INH ທ່ານ ກໍອາດຈະມີໂອກາດ ທີ່ຈະເກີດ ມີປະຕິກິຣິຍາ ເກີດຂື້ນກັບທ່ານຫຼາຍກວ່າ. ຈົ່ງປຶກສານຳ ທ່ານໝໍ ຂອງທ່ານ ຖ້າຫາກຢາກຮູ້ລາຍລະອຽດເພີ່ມຕື່ມ.